ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 05 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 12 MAY 2015

ສຳນັກງານ ຄຄຊ
ເລກທີ 490
ວັນທີ 12 MAY 2015
ໂທລະສັບ 021 217770

**ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ**
**ປະຈຳເດືອນ 03/2015 ແລະ ທິດທາງແຜນການໃນຕໍ່ໜ້າ**

## ພາກທີ I
## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

**I. ວຽກງານການເມືອງແນວຄິດ**

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນໜ່ວຍພັກ, ກົມກອງ ແລະ ອົງການຈັດຕັ້ງມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ພົ້ນເດັ່ນແມ່ນ: ❶ສຳເລັດກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ປະຈຳເດືອນ 3/2015; ❷ສຳເລັດການຈັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ວຽກງານສາຍລັດ ປະຈຳເດືອນ 03/2015; ❸ສຳເລັດການຈັດຕັ້ງໂຄສະນາ-ປາຖະກະຖາເລົ່າມູນເຊື້ອວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 60 ປີ; ❹ສຳເລັດການຈັດຕັ້ງການເຜີຍແຜ່ເອກະສານນຳພາແນວຄິດ ກ່ຽວກັບການເຂົ້າຮ່ວມປະຊາຄົມເສດຖະກິດ-ອາຊ່ຽນ; ❺ສຳເລັດການເປີດການຮຽນ-ການສອນທິດສະການເມືອງການປົກຄອງ ລະບົບ 45 ວັນ ຢູ່ໂຮງຮຽນທິດສະດີນະຄອນຫຼວງວຽງຈັນ ແລະ ຢູ່ສະຖາບັນການທະນາຄານ. ຜ່ານການຈັດຕັ້ງປະຕິບັດດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ວຽກງານທີ່ລັດຖະບານມອບໝາຍໃຫ້**

- ສຳເລັດການຮັບຮອງເອົາແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ແຕ່ປີ 2016-2025 ຈາກຫ້ອງວ່າການລັດຖະບານ;

**III. ວຽກງານພົ້ນເດັ່ນ**

- ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ❶ສຳເລັດການອອກໃບອະນຸຍາດສ້າງຕັ້ງປ່ຽນແທນ ໃຫ້ແກ່ທະນາຄານທີ່ໄດ້ປະກອບທຶນຈົດທະບຽນຕໍ່າສຸດຄົບ 300 ຕື້ກີບ ຈຳນວນ 5 ແຫ່ງ; ❷ສຳເລັດການອອກໃບອະນຸ ຍາດສ້າງຕັ້ງໃຫ້ແກ່ທະນາຄານ ເຟີສແບັງ ຈຳກັດ ສາຂານະຄອນຫຼວງວຽງຈັນ; ❸ສຳເລັດການເຜີຍແຜ່ລະບຽບວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນ ແລະ ລະບຽບວ່າດ້ວຍຄວາມພຽງພໍຂອງທຶນ ໃຫ້ແກ່ສະຖາບັນການເງິນຈຸລະພາກ ທີ່

ສ້າງຕັ້ງໃໝ່ ແລະ ສະຖາບັນການເງິນທີ່ສົ່ງລາຍງານບໍ່ຖືກຕ້ອງ; ❹ສຳເລັດການອອກແຈ້ງການເຖິງທະນາຄານທຸລະກິດທົ່ວລະບົບ ກ່ຽວກັບການຊຳລະຄ່າຄຸ້ມຄອງ ປະຈຳປີ 2015; ❺ສຳເລັດການລົງກວດກາ ສະຖາບັນການເງິນຈຸລະພາກ 14 ແຫ່ງ; ❻ສຳເລັດການອອກແຈ້ງການເຖິງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໃນການຕອບແບບສອບຖາມກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

- ສຳເລັດການຈັດກອງປະຊຸມຕ່າງໆ ທີ່ພົ້ນເດັ່ນ ດັ່ງນີ້: ❶ກອງປະຊຸມຄະນະຊີ້ນຳລວມຕະຫຼາດພັນທະບັດລັດຖະບານໃນ ສປປ ລາວ; ❷ກອງປະຊຸມສຳມະນາວິຊາການກ່ຽວກັບວຽກງານບໍລິຫານຄວາມສ່ຽງ; ❸ກອງປະຊຸມກ່ຽວກັບຮ່າງລະບຽບວ່າດ້ວຍການໂອນເງິນຜ່ານມືຖື; ❹ກອງປະຊຸມປຶກສາຫາລືແຜນລາຍຮັບ-ລາຍຈ່າຍ ແລະ ແຜນການກໍ່ສ້າງພື້ນຖານປະກອບວັດຖຸເຕັກນິກ ປະຈຳປີ 2015; ❺ກອງປະຊຸມສະຫຼຸບວຽກງານສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ປະຈຳປີ 2014; ❻ກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງມຽນມ່າ;
- ສຳເລັດການສັງລວມຊັບສິນຂອງທະນາຄານແຫ່ງ ສປປ ລາວ ລາຍງານໃຫ້ຄະນະຜູ້ວ່າການ ເພື່ອພິຈາລະນາສົ່ງໃຫ້ກະຊວງການເງິນ;
- ສຳເລັດການສະຫຼຸບຂໍ້ມູນປະກົດການຍໍ້ທໍ້ທົ່ວລະບົບທະນາຄານ;
- ສຳເລັດອ່ວຍໜີ້ 3 ແຈ ໂຄງການລົງທຶນຂອງລັດ ຄັ້ງທີ 1 ງວດ 3 ແລະ ງວດ 4 ຈຳນວນ 173 ຕື້ກີບ. ໃນນັ້ນ, ທະນາຄານແຫ່ງ ສປປ ລາວ ໄດ້ຮັບການອ່ວຍໜີ້ 3 ແຈ ຈຳນວນ 30 ຕື້ກີບ;
- ສຳເລັດການສະຫຼຸບປິດບັນຊີຂອງທະນາຄານແຫ່ງ ສປປ ລາວ ປະຈຳປີ 2014;
- ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ຈຳນວນ 1 ສະບັບ, ປັດຈຸບັນ STR ມີທັງໝົດ 132 ສະບັບ.

## IV. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

ຄະນະກຳມະການສະຫະພາບເອີຣົບ (EC) ກຳລັງພິຈາລະນາການອະນຸມັດບ້ວງເງິນ 240 ຕື້ເອີໂຣ ໃຫ້ແກ່ປະເທດເກຣັກ ແລະ ຈະຂະຫຍາຍໄລຍະເວລາໃຫ້ການຊ່ວຍເຫຼືອອອກໄປ ຈົນຮອດທ້າຍເດືອນ 6/2015. ຈຸດປະສົງເພື່ອເປັນການສົ່ງເສີມການຈັດຕັ້ງປະຕິບັດແຜນປະຕິຮູບເສດຖະກິດຂອງປະເທດເກຣັກ. ຢ່າງໃດກໍ່ຕາມ, ຕ້ອງຢູ່ບົນພື້ນຖານການຕົກລົງເຫັນດີເປັນເອກະພາບຈາກບັນດາປະເທດສະມາຊິກເອີຣົບ (EA). ຊຶ່ງປັດຈຸບັນປະເທດສະມາຊິກສ່ວນໃຫຍ່ແມ່ນເຫັນດີເປັນເອກະພາບຕໍ່ແຜນການໃຫ້ການຊ່ວຍເຫຼືອຂອງຄະນະກຳມະການສະຫະພາບເອີຣົບ (EC) ແລ້ວ ແຕ່ມີພຽງສອງປະເທດສະມາຊິກຄື ປະເທດແອັດສະປາຍ ແລະ ປ໊ອກຕຸຍການ ທີ່ຍັງບໍ່ເຫັນດີເປັນເອກະພາບ. ສາເຫດຕົ້ນຕໍເນື່ອງຈາກລັດຖະບານຊຸດໃໝ່ຂອງເກຣັກ ຍັງບໍ່ສະແດງໃຫ້ເຫັນເຖິງຄວາມຈິງໃຈໃນການນຳສະເໜີແຜນປະຕິຮູບພື້ນຖານໂຄງລ່າງທາງດ້ານເສດຖະກິດຂອງປະເທດ ເຖິງແມ່ນວ່າປະເທດເກຣັກ ຈະໄດ້ຮັບອະນຸມັດບ້ວງເງິນກູ້ຢືມດັ່ງກ່າວແລ້ວກໍ່ຕາມ, ແຕ່ປະເທດເກຣັກ ກໍຍັງປະເຊີນກັບບັນຫາ ແລະ ສິ່ງທ້າທາຍຫຼາຍປະການ ໂດຍສະເພາະແມ່ນການປະຕິບັດພັນທະການຊຳລະໜີ້ຕໍ່ຕ່າງປະເທດ ທີ່ກຳລັງຈະຄົບກຳນົດໃນມໍ່ໆນີ້ ເຊັ່ນ: ການຊຳລະໜີ້ສິນໃຫ້ກອງທຶນສາກົນ ຈຳນວນ 2 ຕື້ເອີໂຣ ໃນເດືອນ 3/2015 ແລະ ຈຳນວນ 6,7 ຕື້ເອີໂຣ ໃຫ້ແກ່ທະນາຄານກາງເອີຣົບ ໃນເດືອນ 7/2015.

ທະນາຄານກາງປະເທດອູແກຣນ ໄດ້ປັບຂຶ້ນອັດຕາດອກເບ້ຍພື້ນຖານ ຂຶ້ນມາເປັນ 30% ຈາກ 19,5% ຊຶ່ງເປັນອັດຕາສູງສຸດໃນຮອບ 15 ປີ ຈຸດປະສົງເພື່ອເປັນການສະກັດກັ້ນອັດຕາເງິນເຟີ້ທີ່ມີທ່າອ່ຽງສູງຂຶ້ນ ເນື່ອງຈາກການອ່ອນຄ່າຂອງເງິນ hryvnia. ລັດຖະບານ ສປ ຈີນ ໄດ້ປັບອັດຕາການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດ (GDP) ໃນປີ 2015 ລົງ 0,5% ຈາກ 7,5% ມາເປັນ 7% ຊຶ່ງເປັນລະດັບທີ່ຕ່ຳສຸດໃນຮອບ 25 ປີ ເນື່ອງມາຈາກການລົງທຶນຂອງພາກລັດ ແລະ ເອກະຊົນ ຂະຫຍາຍຕົວຕ່ຳກວ່າລະດັບທີ່ຄາດໝາຍໄວ້ 3,5%.

ສະພາບອັດຕາເງິນເຟີ້ສາກົນ ໃນເດືອນ 2/2015 ເຫັນວ່າມີທ່າອ່ຽງເພີ່ມຂຶ້ນເມື່ອທຽບໃສ່ເດືອນຜ່ານມາ ເຊັ່ນ: ສະຫະພາບເອີຣົບ ຈາກ -0,6% ມາເປັນ -0,3%, ແອັດສະປາຍ ຈາກ -1,3% ມາເປັນ -1,1%, ຝຣັ່ງ ຈາກ -0,4% ມາເປັນ -0,3% ແລະ ອີຕາລີ ຈາກ 0,6% ມາເປັນ 0,09%, ອິນເດຍ ຈາກ 5,11% ມາເປັນ 5,37%, ສປ ຈີນ ຈາກ 0,8% ມາເປັນ 1,4%, ຟີລິບປິນ ຈາກ 2,4 ມາເປັນ 2,5%.

## 2. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາໃຫ້ໄດ້ຕາມຄາດໝາຍທີ່ກໍານົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດ ລຸ່ມນີ້:

- ຖານເງິນຕາປະຈໍາເດືອນ 3/2015 ເພີ່ມຂຶ້ນ 224,13 ຕື້ກີບ ຫຼື 0,84% ທຽບໃສ່ເດືອນ 2/2015, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8.480,04 ຕື້ກີບ ຫຼື 45,76%. ສາເຫດຕົ້ນຕໍ ຍ້ອນ ທຫລ ລ່ວງໜ້າໃຫ້ລັດຖະບານເພື່ອດຸ່ນດ່ຽງງົບປະມານ ຈໍານວນ 700 ຕື້ກີບ ແລະ ປ່ອຍສິນເຊື່ອໃຫ້ໂຄງການບູລິມະສິດຂອງລັດຖະບານ ຈໍານວນ 20 ລ້ານໂດລາ. ໃນຂະນະດຽວກັນ, ທທກ ໂອນເງິນໄປຕ່າງປະເທດ ສຸດທິ 80 ລ້ານໂດລາ. ປະລິມານເງິນ M2 ເພີ່ມຂຶ້ນ 193,98 ຕື້ກີບ ຫຼື 0,35% ທຽບໃສ່ເດືອນ 2/2015, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9.625,99 ຕື້ກີບ ຫຼື 21,28%;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 3/2015 ທຽບໃສ່ເດືອນ 2/2015 ເຫັນວ່າສືບຕໍ່ມີສະຖຽລະພາບ ເຫັນໄດ້ຈາກເງິນກີບທຽບເງິນໂດລາ ແຂງຄ່າ 0,01% ສໍາລັບອັດຕາ ທທກ ແລະ ແຂງຄ່າ 0,07% ສໍາລັບອັດຕາຕະຫຼາດ. ສ່ວນເງິນກີບທຽບເງິນບາດ ອ່ອນຄ່າ 0,29% ສໍາລັບອັດຕາ ທທກ ແລະ ອ່ອນຄ່າ 0,25% ສໍາລັບອັດຕາຕະຫຼາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບອັດຕາຕະຫຼາດ ຫຍັບເຂົ້າຫາກັນສໍາລັບສະກຸນເງິນກີບທຽບໂດລາຄື: ຈາກ 0,23% ມາເປັນ 0,17% ແຕ່ຫຍັບອອກຈາກກັນຈາກ 0,01% ມາເປັນ 0,03% ສໍາລັບສະກຸນເງິນກີບທຽບບາດ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

- ອັດຕາເງິນເຟີ້ປະຈໍາເດືອນ 02/2015 ຕົວເລກເບື້ອງຕົ້ນຢູ່ໃນລະດັບ 1,41% ຫຼຸດລົງ 0,63% ຈາກ 2,04% ໃນເດືອນ 01/2015 ຜ່ານມາ;
- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ທທກ ໃນເດືອນ 03/2015 ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 18,07 % ເນື່ອງມາຈາກປະລິມານຄວາມຕ້ອງການ ແລະ ການສະໜອງເງິນຕາ ຫຼຸດລົງ ຄວາມຕ້ອງການຫຼາຍກວ່າການຕອບສະໜອງຍ້ອນ ທທກ ຂາຍສຸດທິ 37,33 ລ້ານໂດລາທຽບເທົ່າ, ໃນນັ້ນ ຊື້ໂດລາສຸດທິ 16,70 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 1.761,92 ລ້ານບາດ ຫຼື 54,03 ລ້ານໂດລາທຽບເທົ່າ. ທຫລ ຊື້ສຸດທິ 30,12 ລ້ານໂດລາທຽບເທົ່າ, ໃນນັ້ນ ຊື້ໂດລາ ສຸດທິ 29,80 ລ້ານໂດລາ ແລະ ຊື້ເງິນບາດສຸດທິ 10,56 ລ້ານບາດ ຫຼື ທຽບເທົ່າ 0,32 ລ້ານໂດລາທຽບເທົ່າ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

## 3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດວັນທີ 12/3/2015 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 46.295 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,29%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,79% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 51,99% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 1,28% ຊຶ່ງກວມເອົາ 48,01% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດວັນທີ 12/03/2015 (ຕົວເລກເບື້ອງຕົ້ນ) ມີຍອດເຫຼືອສິນເຊື່ອທັງໝົດ 41.736,74 ຕື້ກີບ ຫຼຸດລົງ 0,21% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບກວມເອົາ 49,70% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາ ກວມເອົາ 50,30% ຂອງສິນເຊື່ອທັງໝົດ.

ໃນເດືອນ 03/2015 ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 11,56 ຕື້ກີບ ຫຼຸດລົງ 12,8% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້: ສິນເຊື່ອ 68 ເມືອງທຸກຍາກ ມີຈຳນວນ 10,64 ຕື້ກີບ, ສິນເຊື່ອ 64 ຈຸດສຸມ ມີຈຳນວນ 925,50 ລ້ານກີບ,ບໍ່ມີການປ່ອຍສິນເຊື່ອ 3 ສ້າງ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງ ການກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 03/2015 ມີຈຳນວນ 2.294,19 ຕື້ກີບ ຫຼຸດລົງ 1,5% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້ ໜີ້ປົກກະຕິ ກວມເອົາ 70,2% ແລະ ໜີ້ກາຍສັນຍາ ກວມເອົາ 21,8% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 02/2015 ມີ ຈຳນວນ 3.048,30 ຕື້ກີບ(ຕົວເລກເບື້ອງຕົ້ນ) ເພີ່ມຂຶ້ນ 4,10% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 5,50% ຂອງຍອດເຫຼືອສິນເຊື່ອທັງໝົດ. ສາເຫດທີ່ໜີ້ບໍ່ເກີດດອກອອກຜົນເພີ່ມຂຶ້ນເມື່ອທຽບໃສ່ເດືອນຜ່ານມາ ຍ້ອນທະນາຄານສົ່ງເສີມກະສິກຳ, ທະນາຄານພັດທະນາລາວ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີໜີ້ NPLs ເພີ່ມຂຶ້ນຫຼາຍກວ່າໝູ່.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.069 ສະບັບ ເພີ່ມຂຶ້ນ 13,74% ເປັນເງິນຈຳນວນ 2.362,95 ຕື້ກີບ ຫຼຸດລົງ 5,10% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 132 ຄັ້ງ ມີມູນຄ່າການໂອນ 494,09 ຕື້ກີບ ຫຼຸດລົງ 7,76% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 28/02-27/03/2015 ມີການເຄື່ອນໄຫວຈຳນວນ 4.996 ຄັ້ງ ມີມູນຄ່າ 1.002,70 ຕື້ກີບ ຫຼຸດລົງ 24,34% ເມື່ອທຽບໃສ່ເດືອນຜ່ານມາ. ທະນາຄານທຸລະກິດທີ່ເຮັດທຸລະກຳສູງສຸດ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 1.547 ຄັ້ງ.

### 3.2 ການຊື້-ຂາຍພັນທະບັດ

ໃນເດືອນ 03/2015 ພັນທະບັດກະຊວງການເງິນ ມີການຈຳໜ່າຍພັນທະບັດບ້ວງລະດົມທຶນໃຫ້ ທະນາຄານທຸລະກິດຈຳນວນ 437 ຕື້ກີບ ແລະ ໄດ້ໄຖ່ຖອນພັນທະບັດບ້ວງລ້າງໜີ້ ຈຳນວນ 140 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 5 ບ້ວງ ຊຶ່ງມີຍອດເຫຼືອ 6.572,40 ຕື້ກີບ ແລະ 90 ລ້ານໂດລາ.

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 03/2015 ມີການຈ່າຍດອກເບ້ຍ ພັນທະບັດ ທຫລ ໃຫ້ທະນາຄານທຸລະກິດ ຈຳນວນ 0,21 ລ້ານໂດລາ ແລະ ຍັງບໍ່ທັນມີການໄຖ່ຖອນ ຈຳນວນ 155,50 ລ້ານໂດລາ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.443,48 ຈຸດ ເພີ່ມຂຶ້ນ 3,30% ເມື່ອທຽບໃສ່ເດືອນຜ່ານມາ ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 1,10 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,43 ຕື້ກີບ ຫຼຸດລົງ 77,34% ທຽບໃສ່ເດືອນຜ່ານມາ. ໃນເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 63,36% ຂອງມູນຄ່າການຊື້-ຂາຍທັງໝົດ.

---

[1] ເດືອນ 3/2014 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງບໍ່ຄົບຖ້ວນ;

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.133 ກີບ ເພີ່ມຂຶ້ນ 215 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ ມີປະລິມານຊື້-ຂາຍທັງໝົດ 293.072 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,09 ຕື້ກີບ ຫຼຸດລົງ 4,73% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 55,30% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,54%[2].

- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.165 ກີບ ເພີ່ມຂຶ້ນ 161 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 663.163 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,75 ຕື້ກີບ ຫຼຸດລົງ 83,99% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 59,20% ຂອງມູນຄ່າຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.957 ກີບ ເພີ່ມຂຶ້ນ 319 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.400 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 13,94 ລ້ານກີບ ເພີ່ມຂຶ້ນ 473,95% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

- ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.978 ກີບ ຫຼຸດລົງ 33 ກີບ ເມື່ອທຽບໃສ່ປີທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 146.552 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 582,97 ລ້ານກີບ ຫຼຸດລົງ 38,20% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 37,25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,73%[5].

## V. ດ້ານອ່ອນ ແລະ ຂໍ້ຄົງຄ້າງ

ການຄົ້ນຄວ້າເຊື່ອມຊຶມ ບັນດາເອກະສານ, ຂໍ້ກຳນົດ, ກົດລະບຽບ ແລະ ບັນດາກົດໝາຍຕ່າງໆ ຂອງພະນັກງານຈຳນວນໜຶ່ງຍັງບໍ່ທັນເລິກເຊິ່ງ ການຊອກຮູ້ຮໍ່າຮຽນບັນດາແນວທາງລວມຂອງຂັ້ນເທິງວາງອອກໃນແຕ່ລະໄລຍະ ຍັງເຮັດໄດ້ຈຳກັດ ສ່ວນໃຫຍ່ແມ່ນເລັງໃສ່ແກ້ໄຂວຽກງານປະຈຳວັນ, ການແກ້ໄຂວຽກງານບາງຄັ້ງກໍ່ຍັງບໍ່ທັນກັບສະພາບການ ເນື່ອງຈາກຫຼາຍປັດໃຈກ່ຽວຂ້ອງ, ການປະຕິບັດກົດລະບຽບຂອງຂັ້ນເທິງວາງອອກ ຈຳນວນໜຶ່ງຍັງບໍ່ທັນເຂັ້ມງວດ ເຊິ່ງສະແດງອອກໃນການປະຕິບັດໂມງເວລາລັດຖະການ, ລະບຽບການນຸ່ງຖື, ລະບຽບລັດຖະກອນ ແລະ ເຂົ້າຮ່ວມວຽກງານຂະບວນການຕ່າງໆ ເຖິງວ່າຈະເຮັດໄດ້ ແຕ່ຍັງບໍ່ເປັນຂະບວນເທົ່າທີ່ຄວນ; ການປະຕິບັດວຽກງານຕາມແຜນການດຳເນີນງານ ປະຈຳປີ 2015 ຍັງບໍ່ສາມາດປະຕິບັດໄດ້ຕາມແຜນທີ່ວາງໄວ້ ເນື່ອງຈາກຕ້ອງໄດ້ປະຕິບັດວຽກງານອື່ນທີ່ຮີບດ່ວນ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຈຶ່ງໄດ້ມີການເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານເປັນປົກກະຕິ ໂດຍຖືເອົາການສຳຫຼວດກວດກາປະຈຳເດືອນເປັນບ່ອນຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ ເອົາໃຈໃສ່ປຸກລະດົມພະນັກງານໃຫ້ມີຄວາມກະຕືລືລົ້ນ ມີຄວາມຮັບຜິດຊອບສູງ. ຊຸກຍູ້ພະນັກງານໃຫ້ ມີຄວາມເອົາໃຈໃສ່ຮຽນຮູ້ປະສົບການຕ່າງໆ ດ້ານວຽກງານວິຊາສະເພາະໃຫ້ມີຄວາມໜັກແໜ້ນກວ້າງຂວາງກວ່າເກົ່າ. ສູ້ຊົນເສີມຂະຫຍາຍດ້ານດີ ປັບປຸງແກ້ໄຂຂໍ້ຄົງຄ້າງດ້ານຕ່າງໆ ໃຫ້ຕິດຖອຍເທື່ອລະກ້າວ.

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

# ພາກທີII

# ທິດທາງແຜນການໃນຕໍ່ໜ້າ

## I. ວຽກງານການເມືອງແນວຄິດ

ສືບຕໍ່ນໍາພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດ ຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

## I. ວຽກງານວິຊາສະເພາະ

### 1. ແຜນປະຕິບັດວຽກງານຈຸດສຸມໃນຕໍ່ໜ້າ

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກໍານົດໄວ້ໃນແຜນງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈໍາລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສໍາຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ.
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນໍາໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມ ຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມ ເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນ ໄຂໃຫ້ນໍາໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນໍາໃຊ້ສິນເຊື່ອຢ່າງ ໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກໍາທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆ ໄດ້ແກ່: ❶ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ❷ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການ ບາໂຊ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ດ້ວຍຫຼັກການ ບາໂຊ 2; ❸ຕິດຕາມຮ່າງຂໍ້ຕົກລົງ ເປັນຕົ້ນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ, ເອກະສານສະເໜີຂໍສ້າງຕັ້ງ ທຫລ ສາຂາຊຽງຂວາງ ທີ່ໄດ້ສົ່ງໃຫ້ກະຊວງພາຍໃນ, ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການຂາຍຫຼັກຊັບທີ່ໄດ້ຮັບຈາກການຊໍາລະໜີ້ ຂອງທະນາຄານທຸລະກິດ (ຊໍາລະສະສາງຫຼັກຊັບຄໍ້າປະກັນ), ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການປັບປຸງ ແລະ ເພີ່ມເຕີມເນື້ອໃນບາງມາດຕາ ແລະ ຄໍາແນະນໍາເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮສໍາລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ; ❹ສືບຕໍ່ຄົ້ນຄວ້າ

ປັບປຸງພາລະບົດບາດຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ; ❹ກອງປະຊຸມປັບປຸງຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດ ບັນຊີຂອງທະນາຄານ ແລະ ສະຖາບັນການເງິນ;

- ສືບຕໍ່ປະສານ ແລະ ຕິດຕາມກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການຂໍຄວາມຊ່ວຍເຫຼືອດ້ານວິຊາການ ເພື່ອຫັນການຄຸ້ມຄອງທະນາຄານທຸລະກິດ ຕາມຫຼັກການ Basel II;
- ສືບຕໍ່ປັບປຸງການບັນທຶກບັນຊີ ກ່ຽວກັບເຄື່ອງມືພັນທຸກຳທາງການເງິນ **"Currency Option, Interest Rate Swaps"**, ບົດແນະນຳເພີ່ມເຕີມການບັນທຶກບັນຊີ ສັນຍາຊື້-ຂາຍເງິນຕາຕ່າງປະເທດລ່ວງໜ້າ **(Forward Contract)** ຂອງທະນາຄານກາງ ແລະ ທະນາຄານທຸລະກິດ;
- ກະກຽມເຊັນບົດບັນທຶກຊ່ວຍຈຳ ລະຫວ່າງໜ່ວຍງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ກັບ ກົມພາສີ ກະຊວງການເງິນ, ກົມຕຳຫຼວດເສດຖະກິດ ກະຊວງປ້ອງກັນຄວາມສະຫງົບ ແລະ ໜ່ວຍງານຂໍ້ມູນຕ້ານການຟອກເງິນ ປະເທດກຳປູເຈຍ;
- ສືບຕໍ່ລາຍງານທຸລະກຳທີ່ມີລັກຊະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

ດຣ. ສົມພາວ ໄຟສິດ

## ຕາຕະລາງຄັດຕິດບົດລາຍງານ

### ຕາຕະລາງ ທີ 1: ສະພາບອັດຕາແລກປ່ຽນພາຍໃນ

| ອັດຕາ | ເດືອນຜ່ານມາ 02/2015 | | | ເດືອນນີ້ 03/2015 | | | %(+)ເງິນກີບແຂງ/(-) ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| +ໃນລະບົບ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ໂດລາ | 8,094.16 | 8,125.75 | 8,110.39 | 8,093.11 | 8,123.75 | 8,109.19 | 0.01% | 0.02% | 0.01% |
| ບາດ | 249.75 | 250.83 | 250.32 | 250.45 | 251.52 | 251.06 | -0.28% | -0.28% | -0.29% |
| +ນອກລະບົບ | | | | | | | | | |
| ໂດລາ | 8,107.49 | 8,150.89 | 8,129.19 | 8,106.43 | 8,140.15 | 8,123.29 | 0.01% | 0.13% | 0.07% |
| ບາດ | 249.47 | 251.25 | 250.36 | 250.44 | 251.53 | 250.99 | -0.39% | -0.11% | -0.25% |
| ຜິດດ່ຽງອັດຕາໃນລະບົບ ແລະນອກລະບົບ (%) | | | | | | | | | |
| -ໂດລາ | 0.16% | 0.31% | 0.23% | 0.16% | 0.20% | 0.17% | | | |
| -ບາດ | -0.11% | 0.17% | 0.01% | -0.002% | 0.001% | -0.03% | | | |

### ຕາຕະລາງ ທີ 2: ສະພາບການຊື້-ຂາຍເງິນຕາຕ່າງປະເທດ

| | ເດືອນ 02/2015 | | ເດືອນ 03/2015 | | | (%) +ເພີ່ມຂຶ້ນ/ -ຫລຸດລົງ | |
|---|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ທຽບເທົ່າໂດລາ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | | |
| - ທ/ຄ ທຸລະກິດລັດ | 81.49 | 1,459.08 | 65.41 | 918.72 | 93.59 | -19.73% | -37.03% |
| - ທ/ຄ ທຸລະກິດອື່ນໆ | 119.83 | 1,009.22 | 105.15 | 688.94 | 126.28 | -12.25% | -31.74% |
| ລວມຊື້: | 201.32 | 2,468.30 | 170.56 | 1,607.66 | 219.86 | -15.28% | -34.87% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | | |
| - ທ/ຄທຸລະກິດລັດ | 100.59 | 969.02 | 78.05 | 736.54 | 100.64 | -22.41% | -23.99% |
| - ທ/ຄທຸລະກິດອື່ນໆ | 89.29 | 2,794.78 | 75.81 | 2,633.05 | 156.55 | -15.10% | -5.79% |
| ລວມຂາຍ: | 189.88 | 3,763.80 | 153.86 | 3,369.58 | 257.19 | -18.97% | -10.47% |
| ທທກ ຊື້-ຂາຍສຸດທິ | 11.44 | -1,295.50 | 16.70 | -1,761.92 | -37.33 | 46.01% | 36.00% |
| % ຜິດດ່ຽງຊື້-ຂາຍ | 5.68 | -52.49 | 9.79 | -109.60 | -16.98 | 411.03% | -571.98% |
| ມູນຄ່າການຊື້-ຂາຍ | 391.21 | 6,232.10 | 324.42 | 4,977.24 | 477.05 | -17.07% | -20.14% |
| 3. ຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | | | | | | | |
| - ທຫລ ຊື້ຈາກ ທທກ | 0.00 | 728.70 | 51.30 | 292.56 | 60.27 | 0.00% | -59.85% |
| - ທຫລ ຂາຍໃຫ້ ທທກ | 57.40 | 307.00 | 21.50 | 282.00 | 30.15 | -62.54% | -8.14% |
| ທຫລ ຊື້-ຂາຍສຸດທິ | -57.40 | 421.70 | 29.80 | 10.56 | 30.12 | -151.92% | -97.50% |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 44.38 | 822.86 | 39.45 | 836.59 | 65.11 | -11.10% | 1.67% |
| 5. ຊື້-ຂາຍ ລະຫວ່າງ ທຫລ ກັບພາກສ່ວນອື່ນ (ກະຊວງການເງິນ ແລະ ຮ້ານແລກປ່ຽນເງິນຕາ) | | | | | | | |
| - ທຫລ ຊື້ຈາກພາກສ່ວນອື່ນ | 22.20 | 1,697.76 | 16.08 | 1,873.79 | 73.55 | -27.55% | 10.37% |
| - ທຫລ ຂາຍໃຫ້ພາກສ່ວນອື່ນ | 51.73 | 1.66 | 57.48 | 60.97 | 59.35 | 11.13% | 3,577.02% |
| ທຫລ ຊື້-ຂາຍສຸດທິ | -29.53 | 1,696.10 | -41.40 | 1,812.81 | 14.19 | 40.21% | 6.88% |